ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຮອງຜູ້ວ່າການ ທຫລ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Akihiro Tsuchiya ຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນປະເທດຍີ່ປຸ່ນ (JMOF)



ໃນວັນທີ 11 ຕຸລາ 2024, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ສຸລິວັດ ສຸວັນນະຈູມຄຳ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Akihiro Tsuchiya ຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນປະເທດຍີ່ປຸ່ນ (JMOF) ພ້ອມດ້ວຍຄະນະ, ທີ່ໄດ້ເດີນທາງມາເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45. ຄຽງຄູ່ກັນນີ້, ຜູ້ແທນຈາກ ກະຊວງການເງິນປະເທດຍີ່ປຸ່ນ ກໍໄດ້ຖືໂອກາດດັ່ງກ່າວ ເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ.

ໂດຍມີຈຸດປະສົງເພື່ອເສີມຂະຫຍາຍການຮ່ວມມືລະຫວ່າງ 02 ປະເທດ ກໍຄື: ລາວ ແລະ ຍີ່ປຸ່ນ ໂດຍສະເພາະໃນດ້ານເສດຖະກິດມະຫາພາກ, ຂະແໜງການເງິນ-ທະນາຄານ. ຊຶ່ງ ທ່ານ Akihiro Tsuchiya ໄດ້ສະແດງຄວາມຊົມເຊີຍມາຍັງ ສປປ ລາວ ທີ່ໄດ້ເປັນປະທານຈັດກອງປະຊຸມສຸດຍອດອາຊຽນໃນຄັ້ງນີ້ ໄດ້ຢ່າງຈົບງາມ ແລະ ໄດ້ກ່າວວ່າຈະສືບຕໍ່ສົ່ງເສີມການຮ່ວມມືລະຫວ່າງ 02 ປະເທດ ໃນຫຼາຍດ້ານເປັນຕົ້ນ: ວຽກງານຕະຫຼາດທຶນ ພ້ອມທັງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕ່າງໆ ພາຍໃຕ້ຂອບການຮ່ວມມືອາຊຽນ+3 ແລະ ບັນຫາອື່ນໆ. ໃນໂອກາດດັ່ງກ່າວ, ທ່ານ

ຮອງຜູ້ວ່າການ ທຫລ ກໍໄດ້ສະແດງຄວາມຂອບໃຈມາຍັງ ທ່ານ ຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນປະເທດຍີ່ປຸ່ນ ແລະ ຍິນດີສືບຕໍ່ໃຫ້ການສະໜັບສະໜູນລະຫວ່າງ ລາວ ແລະ ຍີ່ປຸ່ນ ໃຫ້ແໜ້ນແຟ້ນຍິ່ງຂຶ້ນໃນຕໍ່ໜ້າ.





ການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້, ທ່ານ ຮອງຜູ້ວ່າການ ທຫລ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ Akihiro Tsuchiya ຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນປະເທດຍີ່ປຸ່ນ (JMOF) ຊຶ່ງໄດ້ສະແດງໃຫ້ເຫັນເຖິງຄວາມເປັນຫ່ວງເປັນໄຍຂອງປະເທດຍີ່ປຸ່ນ, ພ້ອມທັງໄດ້ແລກປ່ຽນຂໍ້ຄິດເຫັນຫຼາຍດ້ານທີ່ເປັນປະໂຫຍດ ທີ່ຈະມາໜູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢູ່ ທຫລ ໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ ແລະ ທຫລ ກໍ່ຫວັງເປັນຢ່າງຍິ່ງວ່າ: ຈະໄດ້ຮັບການສະໜັບສະໜູນຊ່ວຍເຫຼືອໃນດ້ານຕ່າງໆ ຈາກປະເທດຍີ່ປຸ່ນ ຕື່ມອີກໃນອານາຄົດ.

ຂ່າວ: ກົມຮ່ວມມືສາກົນ
ພາບ: ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*